ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----=====000=====-----

ຄະນະກຳມະການຄຸ້ມຄອງຫຼັກຊັບ | ເລກທີ 0023 /ຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 26 OCT 2016

# ຂໍ້ຕົກລົງ
# ວ່າດ້ວຍລາຍການທີ່ກ່ຽວພັນ

- ອີງຕາມກົດໝາຍວ່າດ້ວຍຫຼັກຊັບ ສະບັບເລກທີ 21/ສພຊ, ລົງວັນທີ 10 ທັນວາ 2012;
- ອີງຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 188/ນຍ, ລົງວັນທີ 24 ກໍລະກົດ 2013;
- ອີງຕາມໜັງສືສະເໜີຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 0149/ສຄຄຊ, ລົງວັນທີ 13 ຕຸລາ 2016.

ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ວິທີການ ແລະ ມາດຕະການ ກ່ຽວກັບລາຍການທີ່ກ່ຽວພັນ ເພື່ອເຮັດໃຫ້ການເຄື່ອນໄຫວທຸລະກິດຂອງ ບໍລິສັດຈົດທະບຽນ, ບຸກຄົນ, ນິຕິບຸກຄົນ ທີ່ກ່ຽວພັນ ໃຫ້ຖືກຕ້ອງ, ມີຄວາມໂປ່ງໃສ, ຍຸຕິທຳ ແລະ ແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດ ຂອງຜູ້ຖືຮຸ້ນ.

### ມາດຕາ 2 ລາຍການທີ່ກ່ຽວພັນ

ລາຍການທີ່ກ່ຽວພັນ ແມ່ນລາຍການເຄື່ອນໄຫວທຸລະກິດທີ່ເກີດຂຶ້ນລະຫວ່າງ ບໍລິສັດ ກັບ ບຸກຄົນ ແລະ ນິຕິບຸກຄົນ ທີ່ກ່ຽວພັນ.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ບຸກຄົນ ທີ່ກ່ຽວພັນ** ໝາຍເຖິງ

1.1 ບຸກຄົນທີ່ຖືຮຸ້ນຂອງ ບໍລິສັດ ແຕ່ ຫ້າສ່ວນຮ້ອຍ ຂຶ້ນໄປຂອງຈຳນວນຮຸ້ນທັງໝົດ;

1.2 ຜູ້ບໍລິຫານ ຂອງບໍລິສັດ.

2. **ນິຕິບຸກຄົນທີ່ກ່ຽວພັນ** ໝາຍເຖິງ

2.1 ນິຕິບຸກຄົນທີ່ຖືຮຸ້ນຂອງ ບໍລິສັດ ຫຼື ນິຕິບຸກຄົນທີ່ຖືກຖືຮຸ້ນໂດຍບໍລິສັດໃນອັດຕາສ່ວນແຕ່ ຫ້າ ສ່ວນຮ້ອຍຂຶ້ນໄປ ຂອງຈຳນວນຮຸ້ນທັງໝົດ;

2.2 ນິຕິບຸກຄົນທີ່ ບຸກຄົນທີ່ກ່ຽວພັນ ຕາມຂໍ້ 1.1 ຫຼື ຜູ້ບໍລິຫານບໍລິສັດ ຕາມຂໍ້ 1.2 ຂອງ ມາດຕານີ້ ເປັນຜູ້ບໍລິຫານ ຫຼື ຖືຮຸ້ນ ແຕ່ ສິບສ່ວນຮ້ອຍ ຂຶ້ນໄປ.

3. **ຜູ້ບໍລິຫານ** ໝາຍເຖິງ ປະທານ, ຮອງປະທານສະພາບໍລິຫານ, ສະມາຊິກສະພາບໍລິຫານ, ຜູ້ອຳນວຍການ ແລະ ຮອງຜູ້ອຳນວຍການ;

4. **ລາຍການເຄື່ອນໄຫວທຸລະກິດທົ່ວໄປ** ໝາຍເຖິງ ລາຍການເຄື່ອນໄຫວທຸລະກິດທີ່ມີເງື່ອນໄຂເປັນທຳ ແລະ ບໍ່ກໍ່ໃຫ້ເກີດການຖ່າຍໂອນຜົນປະໂຫຍດ ພ້ອມທັງບໍ່ເຮັດໃຫ້ຝ່າຍໃດຝ່າຍໜຶ່ງເສຍຜົນປະໂຫຍດ;

5. **ເງື່ອນໄຂເປັນທຳ** ໝາຍເຖິງ

5.1 ລາຄາ ແລະ ເງື່ອນໄຂທີ່ບໍລິສັດ ໃຫ້ກັບບຸກຄົນ ຫຼື ນິຕິບຸກຄົນທົ່ວໄປ;

5.2 ລາຄາ ແລະ ເງື່ອນໄຂທີ່ບຸກຄົນທີ່ກ່ຽວພັນ ໃຫ້ກັບບຸກຄົນ ຫຼື ນິຕິບຸກຄົນທົ່ວໄປ;

5.3 ລາຄາ ແລະ ເງື່ອນໄຂທີ່ບໍລິສັດ ສະແດງໄດ້ວ່າເປັນລາຄາ ແລະ ເງື່ອນໄຂທີ່ຜູ້ປະກອບທຸລະກິດໃນລັກສະນະດຽວກັນໃຫ້ກັບບຸກຄົນ ຫຼື ນິຕິບຸກຄົນທົ່ວໄປ.

6. **ຊັບສິນທີ່ມີຕົວຕົນສຸດທິ** ໝາຍເຖິງ ຊັບສິນລວມ ລົບ ໜີ້ສິນລວມ ລົບ ຊັບສິນທີ່ບໍ່ມີຕົວຕົນ ລົບ ສ່ວນໄດ້ເສຍທີ່ບໍ່ມີການຄວບຄຸມ Non Controlling Interest;

7. **ຊັບສິນທີ່ບໍ່ມີຕົວຕົນ** ໝາຍເຖິງ ຄ່ານິຍົມ, ສິດນຳໃຊ້ທີ່ດິນ ແລະ ສິດໃນການສຳປະທານ ເປັນຕົ້ນ;

8. **ໃຫ້ຄວາມຊ່ວຍເຫຼືອທາງການເງິນ** ໝາຍເຖິງ ໃຫ້ ຫຼື ຮັບເງິນກູ້ ແລະ ສິນເຊື່ອອື່ນໆ ຊຶ່ງແບ່ງເປັນ 2 ປະເພດ ຄື: (1) ຮັບການຊ່ວຍເຫຼືອທາງການເງິນ ແລະ (2) ຊ່ວຍເຫຼືອທາງການເງິນ ທີ່ເກີດຂຶ້ນລະຫວ່າງບໍລິສັດ ກັບ ບຸກຄົນ ຫຼື ນິຕິບຸກຄົນທີ່ກ່ຽວພັນ;

9. **ບໍລິສັດ** ໝາຍເຖິງ ບໍລິສັດຈົດທະບຽນ.

## ມາດຕາ 4 ຫຼັກການເຄື່ອນໄຫວຂອງລາຍການທີ່ກ່ຽວພັນ

ຫຼັກການເຄື່ອນໄຫວຂອງລາຍການທີ່ກ່ຽວພັນ ຕ້ອງປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ມີຄວາມໂປ່ງໃສ ແລະ ຍຸຕິທຳ;
2. ເພື່ອຜົນປະໂຫຍດສູງສຸດຂອງບໍລິສັດ;
3. ປະຕິບັດຕາມຂັ້ນຕອນທີ່ຖືກຕ້ອງ;
4. ເປີດເຜີຍຂໍ້ມູນໃຫ້ຜູ້ລົງທຶນຮັບຊາບ.

## ມາດຕາ 5 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບໍລິສັດຈົດທະບຽນ, ບຸກຄົນ ແລະ ນິຕິບຸກຄົນທີ່ກ່ຽວພັນ ທັງພາຍໃນ ແລະ ຕ່າງປະເທດ.

## ໝວດທີ 2
## ລາຍການທີ່ກ່ຽວພັນຂອງບໍລິສັດ

**ມາດຕາ 6 ຂັ້ນຕອນການດຳເນີນລາຍການທີ່ກ່ຽວພັນ**

ການດຳເນີນລາຍການທີ່ກ່ຽວພັນຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ຂັ້ນຕອນການກວດກາ ບຸກຄົນ ແລະ ນິຕິບຸກຄົນ ທີ່ກ່ຽວພັນຂອງບໍລິສັດ;
2. ຂັ້ນຕອນການກວດກາ ປະເພດລາຍການທີ່ກ່ຽວພັນ;
3. ຂັ້ນຕອນການກວດກາ ການອະນຸມັດລາຍການທີ່ກ່ຽວພັນ;
4. ຂັ້ນຕອນການກວດກາ ການຈັດຕັ້ງປະຕິບັດລາຍການທີ່ກ່ຽວພັນ.

ຂັ້ນຕອນການກວດກາ ບຸກຄົນ ແລະ ນິຕິບຸກຄົນ ທີ່ກ່ຽວພັນຂອງບໍລິສັດ ແມ່ນການກວດກາຂອງ ຄະນະກຳມະການກວດສອບ ລາຍການທີ່ກ່ຽວພັນ ເມື່ອມີການເຄື່ອນໄຫວທຸລະກິດຂອງບໍລິສັດ ກັບບຸກຄົນ ແລະ ນິຕິບຸກຄົນ ເພື່ອກວດກາເບິ່ງວ່າລາຍການດັ່ງກ່າວ ແມ່ນລາຍການທີ່ຕິດພັນກັບ ບຸກຄົນ ແລະ ນິຕິບຸກຄົນ ທີ່ກ່ຽວພັນກັບບໍລິສັດ ຫຼື ບໍ່.

ຂັ້ນຕອນການກວດກາ ປະເພດລາຍການທີ່ກ່ຽວພັນ ແມ່ນການກວດກາລາຍການເຄື່ອນໄຫວທຸລະກິດທີ່ຈະເກີດຂຶ້ນໃນການເຄື່ອນໄຫວທຸລະກິດຂອງ ບໍລິສັດ ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ ຕ້ອງຈຳແນກວ່າ ລາຍການດັ່ງກ່າວນັ້ນ ເປັນ ລາຍການທີ່ກ່ຽວພັນ ຫຼື ລາຍການທີ່ກ່ຽວພັນທີ່ໄດ້ຮັບການຍົກເວັ້ນ.

ຂັ້ນຕອນການກວດກາ ການອະນຸມັດລາຍການທີ່ກ່ຽວພັນ ແມ່ນຂັ້ນການກວດກາການອະນຸມັດລາຍການທີ່ກ່ຽວພັນ ຕາມລະດັບການອະນຸມັດ ຄື: ລະດັບບໍລິສັດ, ລະດັບສະພາບໍລິຫານ ແລະ ລະດັບກອງປະຊຸມຜູ້ຖືຮຸ້ນ ໃຫ້ຖືກຕ້ອງຕາມຫຼັກການ.

ຂັ້ນຕອນການກວດກາ ການຈັດຕັ້ງປະຕິບັດລາຍການທີ່ກ່ຽວພັນ ແມ່ນຂັ້ນຕອນການຕິດຕາມການກວດກາພາຍຫຼັງໄດ້ຮັບການອະນຸມັດແລ້ວ ໃຫ້ດຳເນີນການເຄື່ອນໄຫວທຸລະກິດ ກັບ ບຸກຄົນ ແລະ ນິຕິບຸກຄົນທີ່ກ່ຽວພັນ ແລະ ການລາຍງານ.

**ມາດຕາ 7 ປະເພດລາຍການທີ່ກ່ຽວພັນ**

ປະເພດລາຍການທີ່ກ່ຽວພັນປະກອບມີ:

1. ການຊື້-ຂາຍຊັບສິນ;
2. ການຊື້-ຂາຍ ສິນຄ້າ ແລະ ບໍລິການ;
3. ການຊື້-ຂາຍວັດຖຸດິບ ແລະ ພະລັງງານ;
4. ການເຊົ່າ ຫຼື ໃຫ້ເຊົ່າຊັບສິນ;
5. ເປັນຕົວແທນ ຫຼື ໃຫ້ເປັນຕົວແທນຊື້-ຂາຍ ສິນຄ້າ ແລະ ບໍລິການ;
6. ການລົງທຶນຮ່ວມກັບບຸກຄົນ ແລະ ນິຕິບຸກຄົນທີ່ກ່ຽວພັນ;
7. ການຄ້ຳປະກັນ ຫຼື ໃຫ້ບໍລິການຄ້ຳປະກັນ;
8. ໃຫ້ຄວາມຊ່ວຍເຫຼືອທາງການເງິນ (ຍົກເວັ້ນການເຄື່ອນໄຫວປົກກະຕິ ເຊັ່ນ: ທະນາຄານ ແລະ ສະຖາບັນການເງິນ);
9. ການເຊັນສັນຍາສິດນຳໃຊ້ຕ່າງໆ;
10. ການມອບໃຫ້ ຫຼື ຮັບເອົາຊັບສິນ;
11. ປະເພດລາຍການກ່ຽວພັນອື່ນ ຕາມການກຳນົດຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ.

### ມາດຕາ 8 ລາຍການທີ່ກ່ຽວພັນທີ່ໄດ້ຮັບການຍົກເວັ້ນ

ລາຍການທີ່ກ່ຽວພັນທີ່ໄດ້ຮັບການຍົກເວັ້ນ ມີດັ່ງນີ້:

1. ລາຍການເຄື່ອນໄຫວທຸລະກຳ ຫຼື ການເຄື່ອນໄຫວທຸລະກິດທີ່ເກີດຂຶ້ນລະຫວ່າງ ບໍລິສັດ ກັບ ບຸກຄົນ ຫຼື ນິຕິບຸກຄົນ ທີ່ຖືຮຸ້ນ ຕໍ່າກວ່າ ຫ້າສ່ວນຮ້ອຍ ຂອງຈຳນວນຮຸ້ນທັງໝົດ;
2. ລາຍການເຄື່ອນໄຫວທຸລະກຳ ຫຼື ການເຄື່ອນໄຫວທຸລະກິດທີ່ເກີດຂຶ້ນລະຫວ່າງ ບໍລິສັດ ກັບ ນິຕິບຸກຄົນ ທີ່ກ່ຽວພັນ ທີ່ບໍລິສັດຖືຮຸ້ນ ແຕ່ ຫ້າສິບສ່ວນຮ້ອຍ ຂຶ້ນໄປຂອງຈຳນວນຮຸ້ນທັງໝົດ;
3. ລາຍການເຄື່ອນໄຫວທຸລະກຳ ຫຼື ການເຄື່ອນໄຫວທຸລະກິດທີ່ເກີດຂຶ້ນລະຫວ່າງ ບໍລິສັດ ກັບອົງການຈັດຕັ້ງລັດ ຫຼື ວິສາຫະກິດຂອງລັດ.

## ໝວດທີ 3
## ການອະນຸມັດ, ສູດຄິດໄລ່ ແລະ ການລາຍງານ ລາຍການທີ່ກ່ຽວພັນ

### ມາດຕາ 9 ລະດັບການອະນຸມັດລາຍການທີ່ກ່ຽວພັນ

ການອະນຸມັດລາຍການທີ່ກ່ຽວພັນປະກອບດ້ວຍ ສາມລະດັບຄື: ລະດັບບໍລິສັດ, ລະດັບສະພາບໍລິຫານ ແລະ ລະດັບກອງປະຊຸມຜູ້ຖືຮຸ້ນ.

1. ລະດັບບໍລິສັດ: ລາຍການກ່ຽວພັນທີ່ມີມູນຄ່າ ໜ້ອຍກວ່າ ຫ້າຮ້ອຍ ລ້ານກີບ (500 ລ້ານກີບ) ຫຼື ສູນຈຸດສູນສາມສ່ວນຮ້ອຍ (0,03%) ຂອງຊັບສິນທີ່ມີຕົວຕົນສຸດທິຂອງບໍລິສັດ, ບໍລິສັດ ສາມາດອະນຸມັດລາຍການດັ່ງກ່າວ ໄດ້ຕາມກົດລະບຽບຂອງບໍລິສັດ;
2. ລະດັບສະພາບໍລິຫານ: ລາຍການກ່ຽວພັນທີ່ມີມູນຄ່າ ຫ້າຮ້ອຍ ລ້ານກີບ (500 ລ້ານກີບ) ຫາ ຫ້າຕື້ກີບ (5 ຕື້ກີບ) ຫຼື ສູນຈຸດສູນສາມສ່ວນຮ້ອຍ (0,03%) ຫາ ສາມສ່ວນຮ້ອຍ (3%) ຂອງຊັບສິນທີ່ມີຕົວຕົນສຸດທິຂອງບໍລິສັດ ຕ້ອງໄດ້ຮັບການອະນຸມັດຈາກສະພາບໍລິຫານ;
3. ລະດັບກອງປະຊຸມຜູ້ຖືຮຸ້ນ: ລາຍການກ່ຽວພັນທີ່ມີມູນຄ່າ ຫຼາຍກວ່າ ຫ້າຕື້ກີບ (5 ຕື້ກີບ) ຫຼື ຫຼາຍກວ່າ ສາມສ່ວນຮ້ອຍ (3%) ຂອງຊັບສິນທີ່ມີຕົວຕົນສຸດທິຂອງບໍລິສັດ ຕ້ອງໄດ້ຮັບອະນຸມັດ ຈາກກອງປະຊຸມຜູ້ຖືຮຸ້ນ.

ສຳລັບການຄິດໄລ່ມູນຄ່າ ແລະ ອັດຕາສ່ວນຂອງລາຍການທີ່ກ່ຽວພັນ ໃຫ້ຖືເອົາຜົນການຄິດໄລ່ທີ່ມີມູນຄ່າສູງກວ່າ ເພື່ອເອົາມາເປັນບ່ອນອີງໃນການອະນຸມັດ.

ກໍລະນີ ບໍລິສັດໃນກຸ່ມ ຫຼື ຮູບແບບບໍລິສັດທົ່ວໄປ ເອກະສານລາຍງານການເງິນ ແມ່ນໃຫ້ຖືເອົາເອກະສານລາຍງານການເງິນທີ່ຜ່ານການກວດສອບຈາກບໍລິສັດກວດສອບພາຍນອກຂອງປີຫຼ້າສຸດ. ສຳລັບກຸ່ມບໍລິສັດ ແມ່ນໃຫ້ຖືເອົາເອກະສານລາຍງານເງິນແບບສັງລວມກິດຈະການ.

### ມາດຕາ 10 ການອະນຸມັດລາຍການທີ່ກ່ຽວພັນຂອງສະພາບໍລິຫານ

ການອະນຸມັດລາຍການທີ່ກ່ຽວພັນທີ່ໄດ້ກຳນົດໄວ້ໃນ ມາດຕາ 9 ຂໍ້ 2 ຂອງຂໍ້ຕົກລົງສະບັບນີ້ ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ ຕ້ອງປະກອບຄຳເຫັນກ່ອນສະເໜີເຂົ້າກອງປະຊຸມສະພາບໍລິຫານພິຈາລະນາ.

ການພິຈາລະນາລາຍການທີ່ກ່ຽວພັນ ຂອງສະພາບໍລິຫານ ຕ້ອງປະກອບມີ ສະມາຊິກສະພາບໍລິຫານ ເຂົ້າຮ່ວມຫຼາຍກວ່າ ໜຶ່ງສ່ວນສອງ ຂອງຈຳນວນສະມາຊິກສະພາບໍລິຫານ ທີ່ບໍ່ເປັນບຸກຄົນທີ່ກ່ຽວພັນ.

ກໍລະນີ ສະພາບໍລິຫານມີສະມາຊິກທີ່ເປັນບຸກຄົນທີ່ກ່ຽວພັນຫຼາຍກວ່າ ໜຶ່ງສ່ວນສອງ ຂອງຈຳນວນສະມາຊິກສະພາບໍລິຫານທັງໝົດ ຕ້ອງສົ່ງລາຍການທີ່ກ່ຽວພັນດັ່ງກ່າວ ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນພິຈາລະນາ.

ສະມາຊິກສະພາບໍລິຫານ ທີ່ເປັນບຸກຄົນທີ່ກ່ຽວພັນ ບໍ່ມີສິດໃນການລົງຄະແນນສຽງຕໍ່ກັບວາລະດັ່ງກ່າວ.

**ມາດຕາ 11 ການອະນຸມັດລາຍການທີ່ກ່ຽວພັນ ໂດຍກອງປະຊຸມຜູ້ຖືຮຸ້ນ**

ການອະນຸມັດລາຍການທີ່ກ່ຽວພັນທີ່ໄດ້ກຳນົດໄວ້ໃນ ມາດຕາ 9 ຂໍ້ 3 ຂອງຂໍ້ຕົກລົງສະບັບນີ້ ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ ຕ້ອງສະເໜີຕໍ່ສະພາບໍລິຫານປະກອບຄຳເຫັນ ເພື່ອສະເໜີເຂົ້າກອງປະຊຸມຜູ້ຖືຮຸ້ນພິຈາລະນາ.

ຜູ້ຖືຮຸ້ນທີ່ເປັນບຸກຄົນທີ່ກ່ຽວພັນ ແລະ ນິຕິບຸກຄົນທີ່ກ່ຽວພັນ ບໍ່ມີສິດໃນການລົງຄະແນນສຽງ ແລະ ບໍ່ມີສິດມອບໃຫ້ຄົນອື່ນລົງຄະແນນສຽງແທນ.

**ມາດຕາ 12 ສູດຄິດໄລ່ຊັບສິນທີ່ມີຕົວຕົນສຸດທິ**

ຊັບສິນທີ່ມີຕົວຕົນສຸດທິ ສາມາດຄິດໄລ່ຕາມສູດ ດັ່ງນີ້:

**ຊັບສິນທີ່ມີຕົວຕົນສຸດທິ** = ຊັບສິນລວມ – ໜີ້ສິນລວມ – ຊັບສິນທີ່ບໍ່ມີຕົວຕົນ – ສ່ວນໄດ້ເສຍທີ່ບໍ່ມີການຄວບຄຸມ

(**Net Tangible Assets** = Total Assets – Total Liabilities – Intangible Assets – Non Controlling Interest)

**ມາດຕາ 13 ລາຄາທີ່ນຳໃຊ້ໃນການຄິດໄລ່ລາຍການທີ່ກ່ຽວພັນ**

ການນຳໃຊ້ລາຄາຂອງລາຍການທີ່ກ່ຽວພັນ ສາມາດນຳໃຊ້ລາຄາໃດໜຶ່ງ ດັ່ງນີ້:

1. ລາຄາຕາມການກຳນົດຂອງລັດຖະບານ (ຖ້າມີ);
2. ລາຄາຕາມການຊີ້ນຳຂອງລັດຖະບານ;
3. ລາຄາຕາມການປຽບທຽບກັບລາຄາຕະຫຼາດ.

ກໍລະນີ ບໍລິສັດ ນຳໃຊ້ລາຄາຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 3 ຂອງມາດຕານີ້ ຕ້ອງເປີດເຜີຍຫຼັກການ ແລະ ວິທີການ ພ້ອມທັງອະທິບາຍກ່ຽວກັບຄວາມເໝາະສົມຂອງວິທີການດັ່ງກ່າວ.

ການດຳເນີນລາຍການທີ່ກ່ຽວພັນ ຖ້າຫາກລາຄາຂອງບັນດາລາຍການທີ່ກ່ຽວພັນ ທີ່ລະບຸໃນສັນຍາຫາກມີການປ່ຽນແປງແຕ່ ຫ້າສ່ວນຮ້ອຍຂຶ້ນໄປ ບໍລິສັດ ຕ້ອງມີການກຳນົດລາຄາຄືນໃໝ່ ໂດຍຖືເອົາລາຄາທີ່ປ່ຽນແປງເປັນພື້ນຖານໃນການຄິດໄລ່ ແລະ ດຳເນີນຕາມຂັ້ນຕອນການອະນຸມັດຄືນໃໝ່.

**ມາດຕາ 14 ການລາຍງານ**

ລາຍການທີ່ກ່ຽວພັນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 9 ຂອງຂໍ້ຕົກລົງສະບັບນີ້ ບໍລິສັດ ຕ້ອງສະຫຼຸບຜົນການອະນຸມັດລາຍການທີ່ກ່ຽວພັນເຂົ້າໃນບົດລາຍງານການເງິນປະຈຳປີຂອງບໍລິສັດ.

ພາຍຫຼັງໄດ້ຮັບການອະນຸມັດໃຫ້ດຳເນີນລາຍການທີ່ກ່ຽວພັນ ບໍລິສັດ ຕ້ອງເປີດເຜີຍຂໍ້ມູນດັ່ງກ່າວ ແລະ ລາຍງານໃຫ້ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

## ໝວດທີ 4
## ຄະນະກຳມະການກວດສອບ ແລະ ທີ່ປຶກສາອິດສະຫຼະທາງດ້ານການເງິນຂອງລາຍການທີ່ກ່ຽວພັນ

### ມາດຕາ 15 ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ

ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ ແມ່ນຄະນະກຳມະການໜຶ່ງ ທີ່ຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງໂດຍສະພາບໍລິຫານ ແລະ ມີອາຍຸການ ສອງ ປີ ສາມາດແຕ່ງຕັ້ງຄືນໃໝ່ໄດ້.

ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ ມີພາລະບົດບາດໃນການຕິດຕາມ, ກວດກາລາຍການທີ່ກ່ຽວພັນໃນບໍລິສັດຈົດທະບຽນ ເພື່ອຮັບປະກັນຄວາມໂປ່ງໃສ, ຖືກຕ້ອງ ແລະ ຍຸຕິທຳ.

ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ ຕ້ອງປະກອບດ້ວຍບຸກຄະລາກອນ ຢ່າງໜ້ອຍ ສາມ ທ່ານ ໃນນັ້ນ ໜຶ່ງທ່ານ ຕ້ອງເປັນກຳມະການອິດສະຫຼະ ແລະ ສອງທ່ານແມ່ນຕ້ອງມາຈາກພາຍໃນບໍລິສັດ ຊຶ່ງຕ້ອງເປັນບຸກຄົນທີ່ກຳບັນຫາໄດ້ດີ.

### ມາດຕາ 16 ສິດ ແລະ ໜ້າທີ່ ຂອງຄະນະກຳມະການກວດສອບລາຍການທີ່ກ່ຽວພັນ

ຄະນະກຳມະການກວດສອບລາຍການທີ່ກ່ຽວພັນມີສິດ ແລະ ໜ້າທີ່ ດັ່ງນີ້:

1. ສັງລວມລາຍຊື່ ບຸກຄົນ ແລະ ນິຕິບຸກຄົນ ທີ່ກ່ຽວພັນຂອງບໍລິສັດ ລວມທັງການປ່ຽນແປງລາຍຊື່ຂອງບຸກຄົນ ແລະ ນິຕິບຸກຄົນ ທີ່ກ່ຽວພັນ ໃຫ້ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
2. ຄົ້ນຄວ້າ, ຕິດຕາມ ຂັ້ນຕອນການຈັດຕັ້ງປະຕິບັດລາຍການທີ່ກ່ຽວພັນ;
3. ແຕ່ງຕັ້ງທີ່ປຶກສາອິດສະຫຼະທາງດ້ານການເງິນ;
4. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມການກຳນົດຂອງ ບໍລິສັດ.

### ມາດຕາ 17 ການແຕ່ງຕັ້ງທີ່ປຶກສາອິດສະຫຼະທາງດ້ານການເງິນຂອງລາຍການທີ່ກ່ຽວພັນ

ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ ຕ້ອງແຕ່ງຕັ້ງທີ່ປຶກສາທາງດ້ານການເງິນອິດສະຫຼະໃນກໍລະນີເຫັນວ່າຈຳເປັນໃນການປະກອບ ຄຳເຫັນຕໍ່ລາຍການທີ່ກ່ຽວພັນ ເພື່ອເປັນຂໍ້ມູນຊ່ວຍຜູ້ຖືຮຸ້ນໃນການພິຈາລະນາ ກ່ອນການນຳສະເໜີລາຍການດັ່ງກ່າວຕໍ່ກອງປະຊຸມຜູ້ຖືຮຸ້ນ.

ທີ່ປຶກສາອິດສະຫຼະທາງດ້ານການເງິນຂອງລາຍການທີ່ກ່ຽວພັນແມ່ນ ວິສາຫະກິດບັນຊີ ຫຼື ວິສາຫະກິດກວດສອບ ທີ່ໄດ້ຮັບການຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຫຼື ບໍ່ກໍ່ໄດ້.

ທີ່ປຶກສາອິດສະຫຼະທາງດ້ານການເງິນຂອງລາຍການທີ່ກ່ຽວພັນ ມີພາລະບົດບາດໃນການວິເຄາະ ແລະ ປະກອບຄຳເຫັນໃນລາຍການທີ່ກ່ຽວພັນຂອງບໍລິສັດເພື່ອເປັນຂໍ້ມູນຊ່ວຍຜູ້ຖືຮຸ້ນໃນການພິຈາລະນາລາຍການທີ່ກ່ຽວພັນຂອງບໍລິສັດ.

ວິສາຫະກິດບັນຊີ ຫຼື ວິສາຫະກິດກວດສອບ ທີ່ໃຫ້ບໍລິການດ້ານການບັນຊີ ຫຼື ກວດສອບໃຫ້ແກ່ບໍລິສັດ ບໍ່ສາມາດເປັນທີ່ປຶກສາອິດສະຫຼະທາງດ້ານການເງິນໃຫ້ແກ່ບໍລິສັດ ໃນລະຫວ່າງທີ່ຕົນໃຫ້ບໍລິການແກ່ບໍລິສັດດັ່ງກ່າວ.

### ມາດຕາ 18 ສິດ ແລະ ໜ້າທີ່ຂອງບໍລິສັດທີ່ປຶກສາອິດສະຫຼະທາງດ້ານການເງິນ

ສິດ ແລະ ໜ້າທີ່ ຂອງບໍລິສັດທີ່ປຶກສາອິດສະຫຼະທາງດ້ານການເງິນມີ ດັ່ງນີ້:

1. ຮຽກເອກະສານລາຍລະອຽດຂອງລາຍການທີ່ກ່ຽວພັນ ຈາກສະພາບໍລິຫານ ເປັນຕົ້ນ ລາຍລະອຽດກ່ຽວກັບລາຍການທີ່ກ່ຽວພັນ, ສັນຍາຕ່າງໆ ກ່ຽວກັບລາຍການທີ່ກ່ຽວພັນ ແລະ ແຜນການໃນອານາຄົດພາຍຫຼັງທີ່ຮັບການອະນຸມັດລາຍການທີ່ກ່ຽວພັນ;
2. ສະຫຼຸບສັງລວມ ແລະ ໃຫ້ຄຳເຫັນຕໍ່ກັບລາຍການທີ່ກ່ຽວພັນຂອງບໍລິສັດ;
3. ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ເພື່ອປະກອບຄຳເຫັນ ແລະ ໃຫ້ເຫດຜົນຕໍ່ກັບລາຍການທີ່ກ່ຽວພັນ.

## ໝວດທີ 5
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 19 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນໆ ຕາມລະບຽບການສະເພາະ.

**ມາດຕາ 20 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວພັນຫາກມີການຫຼີກລ້ຽງການອະນຸມັດລາຍການທີ່ກ່ຽວພັນ ຈະຖືກ ສຶກສາອົບຮົມ ຫຼື ປະຕິບັດມາດຕະການ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

ກໍລະນີ ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ ບໍ່ປະຕິບັດສິດ ແລະ ໜ້າທີ່ຂອງຕົນ ຈະຖືກສຶກສາອົບຮົມ ພ້ອມນັ້ນ ບໍລິສັດຈົດທະບຽນຕ້ອງເປີດເຜີຍລາຍຊື່ບຸກຄົນດັ່ງກ່າວໃນບົດລາຍງານປະຈຳປີຂອງບໍລິສັດ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 21 ການຈັດຕັ້ງປະຕິບັດ**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບ, ບໍລິສັດອອກຈຳໜ່າຍຫຼັກຊັບ, ບໍລິສັດຈົດທະບຽນ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວພັນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 22 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນ ລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫາວັນ.

ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ

ຄະນະກຳມະການຄຸ້ມຄອງຫຼັກຊັບ
ປະທານ

ສົມດີ ດວງດີ